ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ | ເລກທີ 333 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 07 ມີນາ 2024

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ຄຳສັ່ງວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 10/ນຍ, ລົງວັນທີ 14 ກໍລະກົດ 2023;
- ອີງຕາມ ການຄົ້ນຄວ້າຂອງກົມຄຸ້ມຄອງເງິນຕາຕ່າງປະເທດ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ ເພື່ອນຳລາຍຮັບເງິນຕາຕ່າງປະເທດດັ່ງກ່າວ ເຂົ້າມາ ສປປ ລາວ ພ້ອມທັງຂາຍເງິນຕາຕ່າງປະເທດ ໃຫ້ລະບົບທະນາຄານຢູ່ ສປປ ລາວ ແນໃສ່ເຮັດໃຫ້ຖານະການຊຳລະກັບຕ່າງປະເທດ ແລະ ຄັງສຳຮອງເງິນຕາຕ່າງປະເທດ ມີຄວາມເຂັ້ມແຂງ.

**ມາດຕາ 2 ການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ**

ການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ ແມ່ນການຈັດຕັ້ງປະຕິບັດບັນດາຫຼັກການ, ລະບຽບການ ແລະ ມາດຕະການ ເພື່ອໃຫ້ເງິນຕາຕ່າງປະເທດ ທີ່ໄດ້ຈາກການສົ່ງອອກເຂົ້າສູ່ລະບົບທະນາຄານ ແລະ ເສດຖະກິດ ຕາມລະບຽບການ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຜູ້ສົ່ງອອກ, ທະນາຄານທຸລະກິດ ແລະ ບັນດາກົມຂອງທະນາຄານແຫ່ງ ສປປ ລາວ.

## ໝວດທີ 2
## ການນຳລາຍຮັບເງິນຕາຕ່າງປະເທດ ຂອງຜູ້ສົ່ງອອກ ເຂົ້າມາ ສປປ ລາວ

**ມາດຕາ 4 ລາຍຮັບເງິນຕາຕ່າງປະເທດຂອງຜູ້ສົ່ງອອກ**

ລາຍຮັບເງິນຕາຕ່າງປະເທດຂອງຜູ້ສົ່ງອອກ ແມ່ນຈຳນວນເງິນຕາຕ່າງປະເທດທີ່ໄດ້ກຳນົດໄວ້ໃນສັນຍາຊື້ ຂາຍ ສິນຄ້າ ແລະ ການບໍລິການ ທີ່ສົ່ງອອກ.

ພາຍຫຼັງສົ່ງອອກສິນຄ້າ ແລະ ການບໍລິການ ແລ້ວ ຜູ້ສົ່ງອອກ ຕ້ອງນຳລາຍຮັບເງິນຕາຕ່າງປະເທດ ທີ່ໄດ້ຈາກການສົ່ງອອກດັ່ງກ່າວ ເຂົ້າມາ ສປປ ລາວ ຜ່ານບັນຊີເງິນຝາກກ່ຽວກັບການນຳເຂົ້າ-ສົ່ງອອກ ຢູ່ທະນາຄານທຸລະກິດ ທີ່ທະນາຄານແຫ່ງ ສປປ ລາວ ໄດ້ອອກໃບຢັ້ງຢືນ.

**ມາດຕາ 5 ອັດຕາສ່ວນ ແລະ ກຳນົດເວລາ ໃນການນຳລາຍຮັບເງິນຕາຕ່າງປະເທດເຂົ້າມາ ສປປ ລາວ**

ຜູ້ສົ່ງອອກ ຕ້ອງຮັບຊຳລະຄ່າສິນຄ້າ ແລະ ການບໍລິການ ກັບຕ່າງປະເທດ ເຂົ້າບັນຊີເງິນຝາກກ່ຽວກັບການນຳເຂົ້າ-ສົ່ງອອກ ພາຍໃນວັນຊຳລະທີ່ໄດ້ກຳນົດໄວ້ໃນສັນຍາຊື້ ຂາຍ ແຕ່ບໍ່ເກີນ ໜຶ່ງຮ້ອຍແປດສິບ (180) ວັນ. ໃນນັ້ນ,ແຕ່ລະຂະແໜງການຕ້ອງນຳລາຍຮັບເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ຕາມອັດຕາສ່ວນຕໍ່າສຸດ ແລະ ຕາມໄລຍະເວລາທີ່ກຳນົດ ດັ່ງນີ້:

1. ຂະແໜງການບໍ່ແຮ່: ແປດສິບຫ້າສ່ວນຮ້ອຍ (85%) ພາຍໃນກຳນົດເວລາ ເກົ້າສິບ (90) ວັນ ນັບແຕ່ວັນທີ່ສົ່ງອອກ;
2. ຂະແໜງການບໍລິການ: ແປດສິບສ່ວນຮ້ອຍ (80%) ພາຍໃນກຳນົດເວລາ ຫົກສິບ (60) ວັນ ນັບແຕ່ວັນທີ່ສົ່ງອອກ;
3. ຂະແໜງການກະສິກຳ: ເຈັດສິບຫ້າສ່ວນຮ້ອຍ (75%) ພາຍໃນກຳນົດເວລາ ຫົກສິບ (60) ວັນ ນັບແຕ່ວັນທີ່ສົ່ງອອກ;
4. ຂະແໜງການອື່ນ: ເຈັດສິບສ່ວນຮ້ອຍ (70%) ພາຍໃນກຳນົດເວລາ ເກົ້າສິບ (90) ວັນ ນັບແຕ່ວັນທີ່ສົ່ງອອກ;
5. ຂະແໜງການໄຟຟ້າ: ຊາວສ່ວນຮ້ອຍ (20%) ພາຍໃນກຳນົດເວລາ ຮ້ອຍແປດສິບ (180) ວັນ ນັບແຕ່ວັນທີ່ສົ່ງອອກ.

ກໍລະນີ ຜູ້ສົ່ງອອກ ບໍ່ສາມາດນຳລາຍຮັບເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ຕາມອັດຕາສ່ວນຕໍ່າສຸດ ແລະ ຕາມໄລຍະເວລາທີ່ກຳນົດ ຕ້ອງນຳເອົາເອກະສານທີ່ກ່ຽວຂ້ອງ ມາຢັ້ງຢືນກັບກົມຄຸ້ມຄອງເງິນຕາຕ່າງປະເທດ ເພື່ອພິຈາລະນາໄລ່ລຽງຕາມຄວາມເໝາະສົມ.

ການກຳນົດອັດຕາສ່ວນຕໍ່າສຸດ ແລະ ກຳນົດເວລາ ໃນການນຳລາຍຮັບເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ຈະມີການປ່ຽນແປງໃນແຕ່ລະໄລຍະ ຕາມເງື່ອນໄຂຈຸດພິເສດ ຂອງແຕ່ລະຂະແໜງການ ໂດຍແມ່ນກົມຄຸ້ມຄອງເງິນຕາຕ່າງປະເທດ ເປັນຜູ້ຄົ້ນຄວ້າ ແລະ ສະເໜີຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ.

## ໝວດທີ 3
## ການຂາຍລາຍຮັບເງິນຕາຕ່າງປະເທດ
## ຈາກການສົ່ງອອກສິນຄ້າ ແລະ ການບໍລິການ

**ມາດຕາ 6 ການຂາຍລາຍຮັບເງິນຕາຕ່າງປະເທດ**

ຜູ້ສົ່ງອອກ ຕ້ອງຂາຍລາຍຮັບເງິນຕາຕ່າງປະເທດຈາກການສົ່ງອອກ ໃຫ້ລະບົບທະນາຄານຢູ່ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ.

**ມາດຕາ 7 ອັດຕາສ່ວນໃນການຂາຍເງິນຕາຕ່າງປະເທດໃຫ້ລະບົບທະນາຄານ**

ອັດຕາສ່ວນໃນການຂາຍເງິນຕາຕ່າງປະເທດໃຫ້ລະບົບທະນາຄານ ແມ່ນຈຳນວນເງິນຕາຕ່າງປະເທດຂອງຜູ້ສົ່ງອອກ ທຽບໃສ່ມູນຄ່າລາຍຮັບຈາກການສົ່ງອອກທີ່ໄດ້ນຳເຂົ້າມາ ສປປ ລາວ ຊຶ່ງຜູ້ສົ່ງອອກມີພັນທະໃນການຂາຍເງິນຕາຕ່າງປະເທດ ໃຫ້ລະບົບທະນາຄານຢູ່ ສປປ ລາວ ເພື່ອດຶງດູດສິນເງິນຕາຕ່າງປະເທດໃຫ້ກັບສັງຄົມ ແນໃສ່ຮັກສາສະຖຽນລະພາບເງິນຕາ ແລະ ສ້າງຄວາມເຂັ້ມແຂງ ຖານະການຊຳລະກັບຕ່າງປະເທດ.

ຜູ້ສົ່ງອອກ ຕ້ອງຂາຍລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງອອກ ຕາມອັດຕາສ່ວນຕ່ຳສຸດ ແລະ ພາຍໃນກຳນົດເວລາສູງສຸດບໍ່ເກີນ ສາມ (3) ວັນລັດຖະການ ນັບແຕ່ວັນທີ່ລາຍຮັບເງິນຕາຕ່າງປະເທດ ເຂົ້າບັນຊີເງິນຝາກກ່ຽວກັບການນຳເຂົ້າ-ສົ່ງອອກ ແຕ່ລະຄັ້ງ ຕາມແຕ່ລະຂະແໜງການ ດັ່ງນີ້:

1. ຂະແໜງການບໍ່ແຮ່: ສາມສິບຫ້າສ່ວນຮ້ອຍ (35%) ຂອງອັດຕາສ່ວນຕ່ຳສຸດໃນການນຳລາຍຮັບ ເຂົ້າມາ ສປປ ລາວ;
2. ຂະແໜງການກະສິກຳ: ສາມສິບສ່ວນຮ້ອຍ (30%) ຂອງອັດຕາສ່ວນຕ່ຳສຸດໃນການນຳລາຍຮັບ ເຂົ້າມາ ສປປ ລາວ;
3. ຂະແໜງການໄຟຟ້າ: ຊາວສ່ວນຮ້ອຍ (20%) ຂອງອັດຕາສ່ວນຕ່ຳສຸດໃນການນຳລາຍຮັບ ເຂົ້າມາ ສປປ ລາວ;
4. ຂະແໜງການບໍລິການ: ຊາວສ່ວນຮ້ອຍ (20%) ຂອງອັດຕາສ່ວນຕ່ຳສຸດໃນການນຳລາຍຮັບ ເຂົ້າມາ ສປປ ລາວ;
5. ຂະແໜງການອື່ນ: ຊາວສ່ວນຮ້ອຍ (20%) ຂອງອັດຕາສ່ວນຕ່ຳສຸດໃນການນຳລາຍຮັບ ເຂົ້າມາ ສປປ ລາວ.

ຜູ້ສົ່ງອອກ ສາມາດຂາຍເງິນຕາຕ່າງປະເທດ ໃຫ້ແກ່ທະນາຄານທຸລະກິດ ເກີນອັດຕາສ່ວນຕ່ຳສຸດ ທີ່ໄດ້ກຳນົດໄວ້ໃນວັກສອງຂອງມາດຕານີ້. ກໍລະນີຜູ້ສົ່ງອອກ ຂາຍເງິນຕາຕ່າງປະເທດ ເກີນອັດຕາສ່ວນຕ່ຳສຸດ ແມ່ນໃຫ້ທະນາຄານທຸລະກິດ ຮັກສາໄວ້ ດຸ່ນດ່ຽງຄວາມຕ້ອງການເງິນຕາຕ່າງປະເທດ ເພື່ອຊຳລະສິນຄ້າ ແລະ ການບໍລິການ ທີ່ຈຳເປັນ.

ກໍລະນີຜູ້ສົ່ງອອກ ບໍ່ຂາຍເງິນຕາຕ່າງປະເທດ ຫຼື ຂາຍເງິນຕາຕ່າງປະເທດບໍ່ຄົບຖ້ວນ ຕາມອັດຕາສ່ວນຕໍ່າສຸດ ແລະ ກໍານົດເວລາ ຊຶ່ງໄດ້ກໍານົດໄວ້ໃນວັກສອງຂອງມາດຕານີ້ ໃນວັນລັດຖະການຖັດມາ, ທະນາຄານທຸລະກິດ ຕ້ອງ ແຈ້ງຜູ້ສົ່ງອອກ ແລ້ວດໍາເນີນການຊື້ເງິນຕາຕ່າງປະເທດ ໃຫ້ຄົບຖ້ວນ.

ລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງອອກຜະລິດຕະພັນນໍາເຂົ້າຈາກຕ່າງປະເທດ ທີ່ບໍ່ໄດ້ຜ່ານການແປຮູບ, ປັບປຸງ ຫຼື ປ່ຽນແປງ ສິນຄ້າ ຫຼື ແປຮູບສ່ວນໃດສ່ວນໜຶ່ງ ຕາມທີ່ກົມຄຸ້ມຄອງເງິນຕາຕ່າງປະເທດ ກໍານົດ ແມ່ນໃຫ້ຂາຍ ເງິນຕາຕ່າງປະເທດໃຫ້ແກ່ລະບົບທະນາຄານຢູ່ ສປປ ລາວ ຈໍານວນໃດໜຶ່ງ ຫຼື ເມື່ອມີຄວາມຕ້ອງການນໍາໃຊ້ຢູ່ພາຍໃນ ສປປ ລາວ.

**ມາດຕາ 8 ການຂາຍເງິນຕາຕ່າງປະເທດໃຫ້ແກ່ທະນາຄານແຫ່ງ ສປປ ລາວ**

ທະນາຄານທຸລະກິດ ທີ່ໄດ້ຊື້ເງິນຕາຕ່າງປະເທດ ຈາກຜູ້ສົ່ງອອກ ຕ້ອງຂາຍເງິນຕາຕ່າງປະເທດດັ່ງກ່າວ ໃຫ້ ທະນາຄານແຫ່ງ ສປປ ລາວ ໃນຈໍານວນຢ່າງໜ້ອຍ ສາມສິບສ່ວນຮ້ອຍ (30%) ຂອງອັດຕາສ່ວນຕໍ່າສຸດ ທີ່ຕົນໄດ້ເກັບ ຊື້ຈາກຜູ້ສົ່ງອອກ ໂດຍດໍາເນີນຜ່ານລະບົບຂອງກົມບໍລິການທະນາຄານ ພາຍໃນວັນທີ່ເກັບຊື້ ຫຼື ວັນລັດຖະການຖັດມາ.

ຜູ້ສົ່ງອອກ ສາມາດຂາຍເງິນຕາຕ່າງປະເທດ ໃຫ້ແກ່ທະນາຄານແຫ່ງ ສປປ ລາວ ດ້ວຍການແຈ້ງເຈດຈໍານົງຕໍ່ ກົມຄຸ້ມຄອງເງິນຕາຕ່າງປະເທດ ແລະ ດໍາເນີນການຂາຍຜ່ານທະນາຄານທຸລະກິດ ໃຫ້ທະນາຄານແຫ່ງ ສປປ ລາວ.

**ມາດຕາ 9 ອັດຕາແລກປ່ຽນ ທີ່ນໍາໃຊ້ໃນການຊື້ ຂາຍ ເງິນຕາຕ່າງປະເທດ**

ອັດຕາແລກປ່ຽນ ທີ່ນໍາໃຊ້ໃນການຊື້ ຂາຍ ເງິນຕາຕ່າງປະເທດ ໃຫ້ປະຕິບັດ ດັ່ງນີ້:

1. ທະນາຄານທຸລະກິດ ທີ່ຊື້ເງິນຕາຕ່າງປະເທດ ຈາກຜູ້ສົ່ງອອກ ໃຫ້ປະຕິບັດຕາມ ອັດຕາຊື້ ທີ່ທະນາຄານ ທຸລະກິດ ກໍານົດໃນແຕ່ລະວັນ ໂດຍສອດຄ່ອງກັບຂໍ້ຕົກລົງວ່າດ້ວຍການກໍານົດອັດຕາແລກປ່ຽນ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ຢ່າງເຂັ້ມງວດ;
2. ທະນາຄານແຫ່ງ ສປປ ລາວ ທີ່ຊື້ເງິນຕາຕ່າງປະເທດ ນໍາທະນາຄານທຸລະກິດ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ແມ່ນນໍາໃຊ້ອັດຕາຂາຍຂອງທະນາຄານທຸລະກິດ ຫຼື ອັດຕາແລກປ່ຽນ ຕາມການເຫັນ ດີຂອງທະນາຄານແຫ່ງ ສປປ ລາວ ໃນວັນທີ່ຊື້ເງິນຕາຕ່າງປະເທດຈາກຜູ້ສົ່ງອອກ.

## ໝວດທີ 4
## ສິດ ແລະ ໜ້າທີ່ ຂອງພາກສ່ວນທີ່ກ່ຽວຂ້ອງ

**ມາດຕາ 10 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງເງິນຕາຕ່າງປະເທດ**

ໃນການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ, ກົມຄຸ້ມຄອງ ເງິນຕາຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ ແລະ ນິຕິກໍາ ກ່ຽວກັບການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດ ຂອງຜູ້ສົ່ງອອກ ເພື່ອສະເໜີຜູ້ວ່າການທະນາຄານແຫ່ງ ສປປ ລາວ ພິຈາລະນາ;
2. ຄົ້ນຄວ້າ ເງື່ອນໄຂ ແລະ ຊຸກຍູ້ ໃຫ້ຜູ້ສົ່ງອອກ ຂາຍເງິນຕາຕ່າງປະເທດ ໃຫ້ແກ່ທະນາຄານທຸລະກິດ ຢູ່ ສປປ ລາວ;

3. ຄົ້ນຄວ້າ ແຈ້ງການ, ຄໍາແນະນໍາ ກ່ຽວກັບການກໍານົດອັດຕາສ່ວນລາຍຮັບເງິນຕາຕ່າງປະເທດຈາກການສົ່ງອອກໃນຮູບແບບເງິນສົດ ຂອງຜູ້ສົ່ງອອກ ແລະ ວິທີການຄິດໄລ່ອັດຕາສ່ວນພັນທະການຂາຍເງິນຕາຕ່າງປະເທດຂອງຜູ້ສົ່ງອອກ;

4. ຕິດຕາມ ກວດກາ ທະນາຄານທຸລະກິດ ໃນການເກັບຊື້ເງິນຕາຕ່າງປະເທດ ຈາກຜູ້ສົ່ງອອກ ແລະ ການຂາຍເງິນຕາຕ່າງປະເທດ ໃຫ້ແກ່ທະນາຄານແຫ່ງ ສປປ ລາວ;

5. ຊຸກຍູ້ທະນາຄານທຸລະກິດ ໃນການຈັດຕັ້ງປະຕິບັດນະໂຍບາຍທີ່ເໝາະສົມ ໃຫ້ແກ່ຜູ້ສົ່ງອອກ ທີ່ຂາຍເງິນຕາຕ່າງປະເທດ ໃຫ້ແກ່ຕົນ;

6. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າໂຈະການສົ່ງອອກສິນຄ້າ ແລະ ການບໍລິການ ຕໍ່ຜູ້ສົ່ງອອກ ທີ່ບໍ່ນໍາລາຍຮັບເປັນເງິນຕາຕ່າງປະເທດ ເຂົ້າມາ ສປປ ລາວ ແລະ ປະຕິເສດການຂາຍເງິນຕາຕ່າງປະເທດ;

7. ສັງລວມ, ວິເຄາະ ແລະ ລາຍງານ ກ່ຽວກັບການຊື້ ຂາຍ ລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ ໃຫ້ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິ;

8. ນໍາໃຊ້ມາດຕະການຕໍ່ຜູ້ລະເມີດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດຂອງຕົນ;

9. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບ ກັບກົມບໍລິການທະນາຄານ, ກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມນະໂຍບາຍເງິນຕາ ໃນການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ມາດຕາ 11 ສິດ ແລະ ໜ້າທີ່ ຂອງກົມບໍລິການທະນາຄານ

ໃນການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ, ກົມບໍລິການທະນາຄານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບຊື້ເງິນຕາຕ່າງປະເທດຂອງຜູ້ສົ່ງອອກ ນໍາທະນາຄານທຸລະກິດ ຕາມລະບຽບການ;
2. ເກັບກໍາ, ສັງລວມ ແລະ ວິເຄາະ ຂໍ້ມູນ ການຊື້ ຂາຍ ເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ ໃຫ້ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິ;
3. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບ ກົມຄຸ້ມຄອງເງິນຕາຕ່າງປະເທດ, ກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມນະໂຍບາຍເງິນຕາ ໃນການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ;
4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ມາດຕາ 12 ສິດ ແລະ ໜ້າທີ່ ຂອງກົມນະໂຍບາຍເງິນຕາ

ໃນການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ, ກົມນະໂຍບາຍເງິນຕາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍອັດຕາແລກປ່ຽນ ໃຫ້ສອດຄ່ອງເໝາະສົມກັບສະພາບການເຄື່ອນໄຫວການຄ້າ ແລະ ການບໍລິການ ກັບຕ່າງປະເທດ ໃນແຕ່ລະໄລຍະ; ៥

2. ສະໜອງຂໍ້ມູນກ່ຽວກັບການໂອນລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ ເຂົ້າມາ ສປປ ລາວ, ອັດຕາແລກປ່ຽນ ແລະ ມູນຄ່າການຊື້ເງິນຕາຕ່າງປະເທດ ຈາກຜູ້ສົ່ງອອກຂອງທະນາຄານທຸລະກິດ ໃຫ້ແກ່ກົມຄຸ້ມຄອງເງິນຕາຕ່າງປະເທດ ປະຈຳອາທິດ;

3. ເກັບກຳ, ສັງລວມ ແລະ ວິເຄາະ ຂໍ້ມູນ ການເກັບຊື້ເງິນຕາຕ່າງປະເທດຈາກຜູ້ສົ່ງອອກ ນຳທະນາຄານທຸລະກິດ;

4. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບ ກົມຄຸ້ມຄອງເງິນຕາຕ່າງປະເທດ, ກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມບໍລິການທະນາຄານ ໃນການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ກົດໝາຍ ແລະ ລະບຽບການ.

**ມາດຕາ 13 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງທະນາຄານທຸລະກິດ**

ໃນການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ, ກົມຄຸ້ມຄອງທະນາຄານທຸລະກິດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ ກວດກາ ກ່ຽວກັບການເກັບຊື້ເງິນຕາຕ່າງປະເທດຈາກຜູ້ສົ່ງອອກ ທີ່ກ່ຽວຂ້ອງກັບການບໍລິຫານລະດັບຖານະເງິນຕາຕ່າງປະເທດ ຂອງທະນາຄານທຸລະກິດ;

2. ນຳໃຊ້ມາດຕະການຕໍ່ທະນາຄານທຸລະກິດທີ່ລະເມີດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດຂອງຕົນ;

3. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບ ກົມຄຸ້ມຄອງເງິນຕາຕ່າງປະເທດ, ກົມນະໂຍບາຍເງິນຕາ ແລະ ກົມບໍລິການທະນາຄານ ໃນການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 14 ສິດ ແລະ ໜ້າທີ່ ຂອງສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ**

ໃນການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ, ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມສະພາບການເຄື່ອນໄຫວ ແລະ ເກັບກຳ ຂໍ້ມູນ, ສະຖິຕິ ຂອງຫົວໜ່ວຍນຳເຂົ້າ-ສົ່ງອອກ ໃນຂອບເຂດທີ່ຕົນຄຸ້ມຄອງ;

2. ຕິດຕາມ ກວດກາ ການເກັບຊື້ເງິນຕາຕ່າງປະເທດຈາກຜູ້ສົ່ງອອກ ຂອງທະນາຄານທຸລະກິດ ເປັນແຕ່ລະໄລຍະ ໃນຂອບເຂດທີ່ຕົນຄຸ້ມຄອງ;

3. ຊຸກຍູ້ ໃຫ້ຜູ້ສົ່ງອອກ ຂາຍເງິນຕາຕ່າງປະເທດໃຫ້ແກ່ທະນາຄານທຸລະກິດ;

4. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບ ກົມຄຸ້ມຄອງເງິນຕາຕ່າງປະເທດ, ກົມຄຸ້ມຄອງທະນາຄານທຸລະກິດ, ກົມນະໂຍບາຍເງິນຕາ ແລະ ກົມບໍລິການທະນາຄານ ໃນການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ. ຣ

**ມາດຕາ 15 ໜ້າທີ່ ຂອງທະນາຄານທຸລະກິດ**

ທະນາຄານທຸລະກິດມີ ໜ້າທີ່ ດັ່ງນີ້:

1. ເປັນເຈົ້າການຕິດຕາມການເຄື່ອນໄຫວກະແສເງິນຕາຕ່າງປະເທດ ຈາກການສົ່ງອອກ ໂດຍການສົມທຽບຂໍ້ມູນ ການສົ່ງອອກ, ການນຳເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ແລະ ການຂາຍເງິນຕາຕ່າງປະເທດໃຫ້ລະບົບທະນາຄານ ຜ່ານລະບົບທັນສະໄໝ;

2. ແນະນຳ ແລະ ແຈ້ງ ໃຫ້ຜູ້ສົ່ງອອກ ໃນການນຳລາຍຮັບເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ແລະ ການຂາຍເງິນຕາຕ່າງປະເທດໃຫ້ລະບົບທະນາຄານ ຕາມລະບຽບການ;

3. ເກັບຊື້ເງິນຕາຕ່າງປະເທດຈາກຜູ້ສົ່ງອອກ ຕາມອັດຕາສ່ວນ ແລະ ກຳນົດເວລາ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ແລະ ໃຫ້ຄວາມຮ່ວມມືກັບ ທະນາຄານແຫ່ງ ສປປ ລາວ ກໍລະນີຜູ້ສົ່ງອອກແຈ້ງເຈດຈຳນົງຂາຍເງິນຕາຕ່າງປະເທດ ຜ່ານຕົນ;

4. ອອກເອກະສານຢັ້ງຢືນການແລກປ່ຽນເງິນຕາ ໃຫ້ແກ່ຜູ້ສົ່ງອອກ ທຸກຄັ້ງ ເພື່ອເປັນຫຼັກຖານ ແລະ ສຳເນົາເອກະສານດັ່ງກ່າວໄວ້ ເພື່ອເປັນບ່ອນອີງໃນການ ຕິດຕາມ, ກວດກາ ຂອງທະນາຄານແຫ່ງ ສປປ ລາວ;

5. ຂາຍເງິນຕາຕ່າງປະເທດ ໃຫ້ແກ່ທະນາຄານແຫ່ງ ສປປ ລາວ ຕາມອັດຕາສ່ວນ ແລະ ກຳນົດເວລາ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

6. ສະໜອງເງິນຕາຕ່າງປະເທດ ໃຫ້ເປົ້າໝາຍທີ່ມີຈຸດປະສົງຊຳລະກັບຕ່າງປະເທດ ເພື່ອນຳເຂົ້າສິນຄ້າ ແລະ ການບໍລິການ ທີ່ເປັນບູລິມະສິດ ເປັນຕົ້ນ ນໍ້າມັນເຊື້ອໄຟ, ຢາປົວພະຍາດ, ການປິ່ນປົວ, ການສຶກສາຢູ່ຕ່າງປະເທດ, ການເຄື່ອນໄຫວວຽກງານລັດຖະການຢູ່ຕ່າງປະເທດ, ພັນທະທາງດ້ານການເງິນ ແລະ ການນຳເຂົ້າ ວັດຖຸດິບ, ຄ່າອຸປະກອນການຜະລິດ ຫຼື ຄ່າບໍລິການ ຕິດພັນກັບການຜະລິດ ເພື່ອການສົ່ງອອກ ພ້ອມທັງຈຳກັດ ການຂາຍເງິນຕາຕ່າງປະເທດ ເພື່ອຊຳລະຄ່າສິນຄ້າ ແລະ ການບໍລິການ ທີ່ມີລັກສະນະຟູມເຟືອຍ ເປັນຕົ້ນ ອະສັງຫາລິມະຊັບ, ພາຫະນະທາງ ບົກ, ອາກາດ, ນໍ້າ ແລະ ການລົງທຶນໃນຊັບສິນດິຈິຕອນ (Digital Asset);

7. ລາຍງານກົມຄຸ້ມຄອງເງິນຕາຕ່າງປະເທດ ກໍລະນີຜູ້ສົ່ງອອກສິນຄ້າ ແລະ ການບໍລິການ ປະຕິເສດການຂາຍເງິນຕາຕ່າງປະເທດ ໃຫ້ແກ່ຕົນ;

8. ລາຍງານຂໍ້ມູນອັດຕາແລກປ່ຽນ ແລະ ມູນຄ່າການເກັບຊື້ເງິນຕາຕ່າງປະເທດຈາກຜູ້ສົ່ງອອກ ຕາມການກຳນົດຂອງກົມນະໂຍບາຍເງິນຕາ;

9. ສະໜອງຂໍ້ມູນ ແລະ ເອກະສານ ທີ່ຕິດພັນກັບການເກັບຊື້ເງິນຕາຕ່າງປະເທດ ຈາກການສົ່ງອອກ ນຳທະນາຄານທຸລະກິດ ຕາມການຮຽກຮ້ອງຂອງທະນາຄານແຫ່ງ ສປປ ລາວ;

10.ຄົ້ນຄວ້ານະໂຍບາຍ ໃຫ້ແກ່ຜູ້ສົ່ງອອກ ທີ່ມີການຂາຍລາຍຮັບເງິນຕາຕ່າງປະເທດຈາກການສົ່ງອອກໃຫ້ຕົນ ເກີນໃນອັດຕາສ່ວນຂັ້ນຕໍ່າທີ່ກຳນົດ ເປັນເວລາ ສາມ (3) ປີ ຕໍ່ເນື່ອງ ຕາມເງື່ອນໄຂ ແລະ ຄວາມສາມາດຂອງຕົນ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 16 ສິດ ແລະ ໜ້າທີ່ ຂອງຜູ້ສົ່ງອອກ**

ຜູ້ສົ່ງອອກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຊຳລະ ຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດ ເຂົ້າບັນຊີເງິນຝາກກ່ຽວກັບການນຳເຂົ້າ-ສົ່ງອອກ ຕາມອັດຕາສ່ວນ ແລະ ເວລາທີ່ກຳນົດ;

2. ຂາຍເງິນຕາຕ່າງປະເທດ ຕາມອັດຕາສ່ວນ ທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ໃຫ້ແກ່ທະນາຄານທຸລະກິດຢູ່ ສປປ ລາວ ເທົ່ານັ້ນ;

3. ນຳໃຊ້ລາຍຮັບເງິນຕາຕ່າງປະເທດ ທີ່ເຫຼືອຈາກການຂາຍໃຫ້ແກ່ທະນາຄານທຸລະກິດ ໃຫ້ຖືກຕ້ອງກັບເປົ້າໝາຍການນຳໃຊ້ເງິນຕາຕ່າງປະເທດ ເປັນຕົ້ນ ການຊຳລະກັບຕ່າງປະເທດ, ການປະຕິບັດພັນທະຕໍ່ລັດ ແລະ ອື່ນໆ ໂດຍສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 17 ຂໍ້ຫ້າມສຳລັບຜູ້ສົ່ງອອກ

ຫ້າມຜູ້ສົ່ງອອກ ມີພຶດຕິກຳ ດັ່ງນີ້:

1. ບໍ່ນຳລາຍຮັບເງິນຕາຕ່າງປະເທດ ຈາກການສົ່ງອອກ ເຂົ້າມາ ສປປ ລາວ ຕາມອັດຕາສ່ວນ ແລະ ເວລາທີ່ກຳນົດ;
2. ປະຕິເສດການໃຫ້ຄວາມຮ່ວມມື ແກ່ທະນາຄານທຸລະກິດ ຫຼື ຫຼົບຫຼີກ ໃນການຂາຍເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ;
3. ຂາຍເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ ໂດຍບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 18 ຂໍ້ຫ້າມສຳລັບທະນາຄານທຸລະກິດ

ຫ້າມທະນາຄານທຸລະກິດ ມີພຶດຕິກຳ ດັ່ງນີ້:

1. ປິດບັງ, ສະໜອງ ແລະ/ຫຼື ລາຍງານ ຂໍ້ມູນບໍ່ຖືກຕ້ອງ ຫຼື ປອມແປງເອກະສານ ກ່ຽວກັບການຊື້ຂາຍລາຍຮັບເງິນຕາຕ່າງປະເທດ ຂອງຜູ້ສົ່ງອອກສິນຄ້າ ແລະ ການບໍລິການ;
2. ໃຫ້ຄວາມຮ່ວມມືກັບຜູ້ສົ່ງອອກສິນຄ້າ ແລະ ການບໍລິການ ເພື່ອຫຼົບຫຼີກ ການຂາຍເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ;
3. ປະຕິເສດ ຫຼື ຫຼົບຫຼີກ ການຂາຍເງິນຕາຕ່າງປະເທດ ຈາກການສົ່ງອອກສິນຄ້າ ແລະ ການບໍລິການ ທີ່ຕົນໄດ້ເກັບຊື້ຈາກຜູ້ສົ່ງອອກ ໃຫ້ແກ່ທະນາຄານແຫ່ງ ສປປ ລາວ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 19 ນະໂຍບາຍຕໍ່ຜູ້ມີຜົນງານ**

ຜູ້ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບນະໂຍບາຍ ຕົ້ນຕໍ ດັ່ງນີ້:

1. ໄດ້ຮັບການຍ້ອງຍໍຈາກທະນາຄານແຫ່ງ ສປປ ລາວ ຫຼື ລັດຖະບານ ຕາມຜົນງານຕົວຈິງ ແລະ ລະບຽບການ;

2. ໄດ້ຮັບຄວາມສະດວກ ໃນການປະກອບເອກະສານ ຢັ້ງຢືນການນຳທຶນເຂົ້າ ສປປ ລາວ, ການກູ້ຢືມລະຫວ່າງປະເທດ, ການໂອນເງິນລະຫ່ວາງປະເທດ ແລະ ອື່ນໆ ຕາມຄວາມເໝາະສົມ;

3. ຖືກຈັດເປັນຫົວໜ່ວຍທີ່ຖືກພິຈາລະນາກ່ອນ ໃນການສະເໜີຊື້ເງິນຕາຕ່າງປະເທດຄືນ ນຳທະນາຄານທຸລະກິດ ເມື່ອມີຄວາມຈຳເປັນໃນການຊຳລະກັບຕ່າງປະເທດ ຕາມຄວາມສາມາດໃນການສະໜອງຄືນຂອງທະນາຄານທຸລະກິດ ແຕ່ລະໄລຍະ.

**ມາດຕາ 20 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ, ຂໍ້ຕົກລົງສະບັບນີ້ ຫຼື ລະບຽບການທີ່ກ່ຽວຂ້ອງ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ປັບໃໝ ແລະ ມາດຕະການທາງບໍລິຫານອື່ນ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ.

**ມາດຕາ 21 ມາດຕະການສຶກສາອົບຮົມ**

ຜູ້ສົ່ງອອກ ແລະ ທະນາຄານທຸລະກິດ ທີ່ລະເມີດຂໍ້ຕົກລົງສະບັບນີ້ ໃນລັກສະນະເບົາ ແລະ ເປັນຄັ້ງທຳອິດ ຈະຖືກສຶກສາອົບຮົມ, ກ່າວເຕືອນ ພ້ອມທັງບັນທຶກຢ່າງເປັນລາຍລັກອັກສອນ.

**ມາດຕາ 22 ມາດຕະການປັບໃໝ**

ທະນາຄານທຸລະກິດ ທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ຖືກປະຕິບັດມາດຕະການສຶກສາອົບຮົມ ແຕ່ຍັງສືບຕໍ່ກະທຳຜິດຊ້ຳ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ປັບໃໝແຕ່ 10.000.000 (ສິບລ້ານ) ກີບ ຫາ 20.000.000 (ຊາວລ້ານ) ກີບ ສຳລັບການເຄື່ອນໄຫວທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້ ມີມູນຄ່າທຽບເທົ່າຕ່ຳກວ່າ 10.000.000 (ສິບລ້ານ) ກີບ ແລະ ການລະເມີດຂໍ້ຫ້າມທີ່ບໍ່ສາມາດກຳນົດມູນຄ່າເປັນຈຳນວນເງິນໄດ້;

2. ປັບໃໝ 10% (ສິບສ່ວນຮ້ອຍ) ຂອງມູນຄ່າທີ່ລະເມີດ ແຕ່ບໍ່ຫຼຸດ 20.000.000 (ຊາວລ້ານ) ກີບ ສຳລັບການເຄື່ອນໄຫວ ທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້ ທີ່ມີມູນຄ່າທຽບເທົ່າແຕ່ 10.000.000 (ສິບລ້ານ) ກີບຂຶ້ນໄປ;

3. ສຳລັບການລະເມີດຊ້ຳໃນແຕ່ລະກໍລະນີ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າປັບໃໝໃນຄັ້ງຫຼ້າສຸດ.

**ມາດຕາ 23 ມາດຕະການໂຈະການສົ່ງອອກສິນຄ້າ ແລະ ການບໍລິການ**

ຜູ້ສົ່ງອອກ ທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ຖືກປະຕິບັດມາດຕະການສຶກສາອົບຮົມ ແຕ່ຍັງສືບຕໍ່ກະທຳຜິດຊໍ້າ ໃຫ້ກົມຄຸ້ມຄອງເງິນຕາຕ່າງປະເທດ ລາຍງານຂະແໜງການທີ່ກ່ຽວຂ້ອງ ເພື່ອໂຈະການສົ່ງອອກສິນຄ້າ ແລະ ການບໍລິການ ຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 24 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງເງິນຕາຕ່າງປະເທດ ແລະ ກົມບໍລິການທະນາຄານ ເປັນເຈົ້າການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ກົມນະໂຍບາຍເງິນຕາ, ກົມຄຸ້ມຄອງທະນາຄານທຸລະກິດ, ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ, ທະນາຄານທຸລະກິດ ແລະ ຜູ້ສົ່ງອອກ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 25 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 29 ມີນາ 2024 ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ບຸນເຫຼືອ ສິນໄຊວໍຣະວົງ